# ສະຫລອງໄຊຊະນະ

ໃນມື້ວັນທີ່ 11 ກັນຍາ ທີ່ຜ່ານມາຜູ້ຂຽນໄດ້ມີໂອກາດໄປຮ່ວມງານກິນລ້ຽງພິເສດທີ່ມີອາຫານຄາວຫວານ ຫລາຍເຍື່ອງຫລາຍຢ່າງ ແລະພິເສດສຸດກໍ່ແມ່ນ ***ປີ້ນຂາງົວ*** ຊຶ່ງຈັດຂຶ້ນທີ່ເດີ່ນຫລັງບ້ານ ຂອງທ່ານ ກ໊ອດ ທີ່ເມືອງລາວາລ ດ້ວຍຄວາມສົນໃຈຜູ້ຂຽນຈຶ່ງສືບຈຶ່ງຖາມຂອກຮູ້ວ່າແມ່ນເນື່ອງໃນໂອກາດຫຍັງແທ້ຈຶ່ງມີ ***ການຍໍ້າການກິນ*** ແຖມຍັງມີດົນຕຣີຢ່າງຄົບຊຸດອີກ ມີແຂກຄົນທີ່ລື້ງໜ້າລື້ງຕາກັນທັງນັ້ນໄປຮ່ວມ ຫລັງຈາກໝົດເບັຽໄປສອງສາມຂວດແລ້ວຈຶ່ງພໍສະລຸບໄດ້ວ່າແມ່ນເພື່ອສະຫລອງໄຊຊະນະໃນໂອກາດທີ່ ທີມກິລາເຕະບາລອາວຸໂສ ເມືອງຫາດຊາຍຟອງໄດ້ຄອງແຊ້ມປີນີ້ ໂດຍຊະນະທີມ Alfa ຜູ້ຂຽນເສັຽດາຍທີ່ບໍ່ໄດ້ມີໂອກາດໄປເບິ່ງການແຂ່ງຂັນເທື່ອນີ້ ແຕ່ຕາມທີ່ໄດ້ຍິນຈາກການສົນທະນາກັນໃນມື້ນັ້ນກໍ່ພໍເດົາໄດ້ວ່າມີຄວາມດຸເດືອດຝົດຟື້ນມ່ວນຊື່ນພໍສົມຄວນ ຜົລປາກົດວ່າ ທີມຫາດຊາຍຟອງ ເອົາຊະນະໄປ 4 ປະຕູຕໍ່ 0 ແລະຄວ້າແຊ້ມປີນີ້ໄປຄອງແລະພິທີມອບຂັນຊະນະເລີດຢ່າງເປັນທາງການກໍ່ຈະຈັດຂຶ້ນໃນຕອນແລງຂອງວັນທີ່ 23 ກັນຍາ ທີ່ຮ້ານອາຫານ **Le President**












